ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ກະຊວງການເງິນ

ກົມພາສີ

ເລກທີ01284/ກພສ

ນະຄອນຫລວງວຽງຈັນ, ວັນທີ 09 NOV 2012

# ແຈ້ງການແນະນຳ

ເຖິງ : ບັນດາພາສີປະຈຳເຂດ ແລະ ດ່ານພາສີ ໃນທົ່ວປະເທດ.

ເລື່ອງ : ການຈັດຕັ້ງຜັນຂະຫຍາຍຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 22/ນຍ ລົງວັນທີ 26 ກັນຍາ ກ່ຽວກັບການການແນະນຳປະຕິບັດຂໍ້ທີ 10.0 ຂອງຂໍ້ຕົກລົງສະບັບເລກທີ 32/ນຍ ລົງວັນທີ 6 ມີນາ 2012.

- ອີງຕາມກົດໝາຍພາສີ ສະບັບເລກທີ 04/ສພຊ ລົງວັນທີ 20 ທັນວາ 2011.
- ອີງຕາມກົດໝາຍວ່າດ້ວຍປ່າໄມ້ ເລກທີ 06/ສພຊ ລົງວັນທີ 24 ທັນວາ 2007.
- ອີງຕາມຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22 ກັນຍາ 2008 ວ່າດ້ວຍການເພີ່ມທະວີຄວາມເຂັ້ມງວດໃນການຄຸ້ມຄອງ, ປົກປັກຮັກສາປ່າໄມ້ ແລະ ການປະສານງານ ໃນການຄຸ້ມຄອງປ່າໄມ້ ແລະ ທຸລະກິດໄມ້.
- ອີງຕາມ ຄຳເຫັນຂອງທ່ານລັດຖະມົນຕີວ່າການກະຊວງການເງິນ ລົງວັນທີ 1/10/2012

ເພື່ອຮັບປະກັນການຈັດຕັ້ງປະຕິບັດ ກ່ຽວກັບການຄຸ້ມຄອງໄມ້ສົ່ງອອກ ຂອງບັນດາດ່ານພາສີ ໃຫ້ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ ແລະ ມີຄວາມເປັນເອກະພາບໃນຂອບເຂດທົ່ວປະເທດ.

ກົມພາສີ ອອກແຈ້ງການແນະນຳ, ຄື :

1. ການສົ່ງໄມ້ທ່ອນ, ໄມ້ເລື່ອຍ, ຕໍໄມ້, ປູດໄມ້ ແລະ ໄມ້ເຄິ່ງສຳເລັດຮູບ ອອກຕ່າງປະເທດ ຕ້ອງມີອະນຸຍາດຂອງລັດຖະບານ ແລະ ເອກະສານຂອງຂະແໜງການກ່ຽວ ຈຶ່ງສາມາດດຳເນີນການແຈ້ງພາສີເປັນລາຍລະອຽດໃນການສົ່ງອອກໄມ້ຈຳນວນດັ່ງກ່າວໄດ້. ມີພຽງແຕ່ລັດຖະບານເທົ່ານັ້ນມີສິດໃນການພິຈາລະນາ ແລະ ຕົກລົງເປັນກໍລະນີພິເສດ ກ່ຽວກັບການສົ່ງອອກໄມ້ປະເພດດັ່ງກ່າວ ຕາມທີ່ກຳນົດໄວ້ໃນກົດໝາຍວ່າດ້ວຍປ່າໄມ້ ສະບັບເລກທີ 06/ສພຊ ລົງວັນທີ 24 ທັນວາ 2007ມາດຕາ 52 ວ່າດ້ວຍການນຳເຂົ້າ-ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້, ຄຳສັ່ງນາຍົກລັດຖະມົນຕີ ສະບັບເລກທີ 17/ນຍ ລົງວັນທີ 22 ກັນຍາ 2008 ຂໍ້ 23.

2. ການສົ່ງອອກຜະລິດຕະພັນໄມ້ສຳເລັດຮູບ ຕ້ອງມີຮູບແບບ ແລະ ມາດຖານ ສອດຄ່ອງກັບຂໍ້ຕົກລົງກະຊວງອຸດສະຫະກຳ-ການຄ້າ ສະບັບເລກທີ 1415/ອຄ.ກອກ ລົງວັນທີ 28 ສິງຫາ 2008 ວ່າດ້ວຍຮູບແບບ ແລະ ຂະໜາດຜະລິດຕະພັນໄມ້.

3. ຂັ້ນຕອນໃນການປະກອບເອກະສານສົ່ງອອກ ໃຫ້ປະຕິບັດຕາມກົດໝາຍພາສີສະບັບເລກທີ 04/ສພຊ ລົງວັນທີ 20 ທັນວາ 2011 ແລະ ແຈ້ງການຂອງກະຊວງອຸດສະຫະກຳ-ການຄ້າ ສະ ບັບເລກທີ 1904/ອຄ.ກຂອ ລົງວັນທີ 30 ກັນຍາ 2011 ກ່ຽວກັບຂັ້ນຕອນການອອກອະນຸ ຍາດນຳເຂົ້າ-ສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ ແລະ ແຈ້ງການເພີ່ມເຕີມຂອງຫ້ອງການກະຊວງອຸດສະຫະກຳ-ການຄ້າ ສະບັບເລກທີ 2857/ຫອກ.ກຂອ ລົງວັນທີ 11 ພະຈິດ 2011 ກ່ຽວກັບການປັບປຸງ ແຈ້ງການ ສະບັບເລກທີ 1904/ອຄ.ກຂອ ລົງວັນທີ 30 ກັນຍາ 2011 ຢ່າງເຂັ້ມງວດ.

4. ໃຫ້ເພີ່ມທະວີການວຽກງານກວດກາການສົ່ງອອກໄມ້ທຸກປະເພດ ຢູ່ບັນດາດ່ານພາສີ ໃຫ້ຖືກຕ້ອງສອດຄ່ອງກັບລະບຽບກົດໝາຍ. ສຳລັບດ່ານທີ່ມີເຄື່ອງກວດກາດ້ວຍລະບົບສາຍແສງ (ສະແກນເນີ) ໃຫ້ນຳໃຊ້ຢ່າງມີປະສິດທິພາບ, ໝາຍວ່າທຸກການສົ່ງອອກໄມ້ ຕ້ອງໄດ້ຜ່ານການ ສະແກນ ຕາມທີ່ໄດ້ກຳນົດໃນ ມະຕິກອງປະຊຸມວຽກງານກວດຄືນການແຈ້ງ ແລະ ວຽກງານສະແກນເນີ ສະບັບເລກທີ 01111/ກພສ ລົງວັນທີ 6/11/2012 , ຖ້າເຈົ້າໜ້າທີ່ຜູ້ໃດ, ການຈັດຕັ້ງດ່ານໃດ ຫາກລະເມີດ ຫລື ບໍ່ເຂັ້ມງວດໃນການກວດກາ ຈະໄດ້ຖືກປະຕິບັດວິໄນ ຢ່າງເຂັ້ມງວດ.

5. ມອບໃຫ້ພາສີປະຈຳເຂດ, ດ່ານພາສີ ໃນທົ່ວປະເທດ ສະຫລຸບສັງລວມຄືນ ຈຳນວນໄມ້ ທີ່ຂະແໜງການກ່ຽວຂ້ອງ ໄດ້ອອກອະນຸຍາດໃຫ້ສົ່ງອອກຜ່ານມາ ແຕ່ຍັງບໍ່ທັນສົ່ງອອກໝົດ, ສົ່ງໃຫ້ກົມພາສີ ບໍ່ໃຫ້ກາຍວັນທີ 30 ພະຈິກ (11) 2012.

6. ເດັດຂາດບໍ່ອະນຸຍາດໃຫ້ມີການສົ່ງອອກໄມ້ ທີ່ບໍ່ສອດຄ່ອງກັບເງື່ອນໄຂຂໍ້1 ຂ້າງເທິງ. ຖ້າພາສີປະຈຳເຂດ ຫລື ດ່ານພາສີ ຫລື ເຈົ້າໜ້າທີ່ພາສີໃດ ຫາກຝ່າຝືນ ຕ້ອງຖືກປະຕິບັດວິໄນ ຢ່າງເຂັ້ມງວດ.

7. ມອບໃຫ້ພາສີປະຈຳແຕ່ລະເຂດ ເອົາໃຈໃສ່ແກ້ໄຂປະກົດການຫຍໍ້ທໍ້ ໃນຂົງເຂດຮັບຜິດຊອບ ໂດຍເພີ່ມທະວີການກວດກາ-ກວດການ ການປະຕິບັດໜ້າທີ່ຂອງເຈົ້າໜ້າທີ່ພາສີປະຈຳດ່ານພາສີ ໃຫ້ມີຄວາມເຂັ້ມງວດ ໃນປະຕິບັດລະບຽບກົດໝາຍ ມີມາດຕະການເດັດຂາດຕໍ່ຜູ້ລະເມີດລະບຽບການ ແລະ ພ້ອມກັນຈັດຕັ້ງປະຕິບັດແຈ້ງການແນະນຳສະບັບນີ້ ຢ່າງເຂັ້ມງວດ

8. ແຈ້ງການແນະນຳສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ. ບັນດາລະບຽບແຈ້ງການຂອງກົມພາສີສະບັບໃດ ທີ່ມີເນື້ອໃນຂັດກັບແຈ້ງການແນະນຳສະບັບນີ້ ລ້ວນແຕ່ຖືກລົບລ້າງ.

ບ່ອນສົ່ງ:

| | |
|---|---|
| -ທ່ານລັດຖະມົນຕີວ່າການກະຊວງການເງິນ | 1 ສະບັບ |
| -ຫ້ອງການກະຊວງອຸດສະຫະກຳ-ການຄ້າ | 1 ສະບັບ |
| -ຫ້ອງການກະຊວງກະສິກຳ-ປ່າໄມ້ | 1 ສະບັບ |
| -ກົມກວດກາການເງິນ, ກະຊວງການເງິນ | 1 ສະບັບ |
| -ກົມຄຸ້ມຄອງຊັບສິນຂອງລັດ, ກະຊວງການເງິນ | 1 ສະບັບ |
| -ພະແນກການອ້ອມຂ້າງກົມພາສີ, ພະແນກລະ | 1 ສະບັບ |

ຫົວໜ້າກົມພາສີ

ອາດສະພັງທອງ ສີພັນດອນ
Athsaphangthong SIPHANDONE